ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ 489 /ຄຊກລ.ຫກ.ຄພ
ນະຄອນຫລວງວຽງຈັນ, ວັນທີ 19 ມິຖຸນາ 2023

**ບົດລາຍງານຜົນຂອງການລົງຕິດຕາມກວດກາ**

**ເຄື່ອນໄຫວວຽກງານເກັບກູ້ລະເບີດຂອງໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳ ແຂວງ ຊຽງຂວາງ (ຄກລ).**

**1.** ພາກສະເໜີ.

ປະຕິບັດຕາມຂໍ້ຕົກລົງ ຂອງຫົວໜ້າຫ້ອງການ ສະບັບເລກທີ 439/ຫຄຊກລ,ບຫ ລົງວັນ 07/06/2023, ລະຫ່ວາງວັນທີ 7 ຫາ 14 ມິຖຸນາ 2023, ທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ຮ່ວມກັບ ຄຄກລຂ ໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳ ແຂວງ ຊຽງຂວາງ ໂດຍມີວິຊາການ ຂັ້ນ 4 ໄດ້ດຳເນີນການເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດວຽກງານ ສຳຫຼວດບໍ່ແມ່ນດ້ານວິຊາການ, ສຳຫຼວດດ້ານວິຊາການ ການເກັບກູ້ ແລະ ທຳລາຍລະເບີດ ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນຮຽງ ສຸກຈັນທະລາວົງ, ວິຊາການ ຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
2. ທ່ານ ພູວົງ ສີສະໜັກ, ວິຊາການ ຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ.
3. ທ່ານ ບຸນປອນ ທຳມະວົງສາ, ວິຊາການ ຄຸ້ມຄອງຄຸນນະພາບ/ແພດ ຫ້ອງການ ຄຊກລ.
4. ທ່ານ ພອງສອນ ໄຊສົມບັດ, ວິຊາການ ຄຸ້ມຄອງຄຸນນະພາບ ຄຊກລ.
5. ທ່ານ ໜູຜິດ ໄຊຊະນະ, ວິຊາການ ຄຸ້ມຄອງຄຸນນະພາບ/ຂັບລົດ ຫ້ອງການ ຄຊກລຂ.
6. ທ່ານ ບຸນເຮືອງ ແສງທຸມມີ, ວິຊາການ ຫ້ອງການ ຄຄກລຂ.
7. ທ່ານ ຍຸງຄຳ ວົງລະພາ, ວິຊາການ ຫ້ອງການ ຄຄກລຂ.

ພາກສ່ວນໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳ ແຂວງ ຊຽງຂວາງ ຄກລ.

1. ທ່ານ ວັນດີ ວິລະວົງສາ ຊ່ຽວຊານທຳລາຍລະເບີດຂັ້ນສູງ (SEOD) ຄກລ ແຂວງ ຊຽງຂວາງ.
2. ທ່ານ ກົ້ວເນັ້ງຢ່າງ ຫົວໜ້າແພດ ຄກລ ປະຈຳ ແຂວງຊຽງຂວາງ.

**2.** ຈຸດປະສົງ.

ລົງຕິດຕາມກວດກາຄັ້ງນີ້ແມ່ນເນັ້ນໃສ່ກວດກາດ້ານເຕັກນິກ ຂອງການປະຕິບັດງານສຳລັບວຽກງານເກັບກູ້ເນື້ອທີ່ໂຄງ ການເກັບກູ້ລະເບີດແຫ່ງຊາດ ປະຈຳ ແຂວງ ຊຽງຂວາງ ໄດ້ປະຕິບັດຕາມແຜນປະຈຳປີ 2023 ເພື່ອເຄື່ອນໄຫວວຽກງານເກັບກູ້, ສຳຫຼວດບໍ່ແມ່ນວິຊາການ, ສຳຫຼວດທາງດ້ານວິຊາການ, ໂຄສະນາສຶກສາຄວາມສ່ຽງ ໃນ 04 ຕົວເມືອງຄື : ເມືອງແປກ, ເມືອງຄຳ, ເມືອງໜອກ ແລະ ເມືອງພູກູດ.

**3.** ຈຳນວນພະນັກງານ ແລະ ຄຸນນະວຸດທິພະນັກງານ ຄກລ ປະຈຳ ແຂວງ ຊຽງຂວາງ

ຄກລ ປະຈຳ ແຂວງ ຊຽງຂວາງ ມີພະນັກງານທັງໝົດ 167 ຄົນ ຍິງ 46, ປະຈຳຫ້ອງການ 14 ຄົນ, ຍິງ 06 ຄົນ, ວິຊາການ ທຳລາຍລະເບີດຂັ້ນສູງຈຳນວນ 02 ທ່ານ ຍິງ 01 ທ່ານ ຜູ້ຊ່ວຍ (SEOD) 02 ທ່ານ ຍິງ 01 ທ່ານ, ພາກສະໜາມມີພະນັກງານ 151 ຄົນ, ຍິງ 40 ຄົນ, ປະກອບມີທີມງານທັງໝົດ 17 ທີມ, ໃນນີ້ມີ 11 ທີມງານເກັບກູ້, ທີມໂຄສະນາສຶກສາຄວາມສ່ຽງ (MRE) 01 ທີມ, ທີມສຳຫຼວດບໍ່ແມ່ນດ້ານວິຊາການ (NTS) 01 ທີມ, ທີມງານສຳຫຼວດດ້ານເຕັກນິກ (TS) 02 ທີມ, ໄດ້ຮັບທຶນສະໜັບສະໜູນຈາກປະເທດນິວຊີແລນ, ຊຶ່ງພະນັກງານທັງໝົດແມ່ນໄດ້ຜ່ານການຝຶກອົບຮົມຫຼັກສູດຈາກສູນຝຶກ ຄກລ ແຫ່ງຊາດ.

**4.** ບັນດາໜ້າວຽກທີ່ ຄກລ ປະຈໍາ ແຂວງ ຊຽງຂວາງ ຈັດຕັ້ງປະຕິບັດແຕ່ເດືອນ 01 ຫາ 05/2023 ໄດ້ຄື :

- ວຽກງານໂຄສະນາສຶກສາຄວາມສ່ຽງ (MRE) ແມ່ນເຮັດວຽກໂຄສະນາກ່ຽວກັບຄວາມສ່ຽງຕາມໝູ່ບ້ານ ອີງຕາມແຜນການ ຂອງປີໂຄງການ ເກັບກູ້ລະເບີດແຫ່ງຊາດ ປະຈໍາ ແຂວງ ຊຽງຂວາງ ຈໍານວນ 50 ໝູ່ບ້ານ ສາມາດຈັດຕັ້ງປະຕິບັດໂຄສະນາໄດ້ 21 ໝູ່ບ້ານ ຈໍານວນຜູ້ຊາຍ 13,062 ຄົນ, ຈໍານວນຜູ້ຍິງ 9,462 ຄົນ, ລວມມີຜູ້ເຂົ້າຮ່ວມຮັບຟັງ 22,528 ຄົນ, ເທົ່າກັບ 42 % ຂອງແຜນປີ.
- ວຽກງານສໍາຫຼວດບໍ່ແມ່ນວິຊາການ (NTS) ຕາມແຜນປີຈໍານວນ 11 ໝູ່ບ້ານ ໄດ້ຈັດຕັ້ງລົງເກັບກໍາຂໍ້ມູນຕົວຈິງຈາກປະຊາຊົນລາຍງານໄດ້ 07 ໝູ່ບ້ານ, ມີປະເພດບົມບີ້ຈໍານວນ 137 ໜ່ວຍ, ມິນ 0 ໜ່ວຍ, ສໍາພາວຸດ 16 ລູກ, ລວມ 153 ລູກ, ຜູ້ໄດ້ຮັບຜົນປະໂຫຍດມີຄື: ຜູ້ຊາຍ 1,127 ຄົນ ຍິງ 1,163 ຄົນ ລວມຜູ້ໄດ້ຮັບຜົນປະໂຫຽດທັງໝົດ 2,290, ເທົ່າກັບ 63,63 % ຂອງແຜນປີ.
- ວຽກງານກວດກູ້ເນື້ອທີ່ (AC) ແມ່ນໄດ້ກວດກູ້ຕາມ (CHA) ຂອງທີມງານສໍາຫຼວດທາງດ້ານວິຊາການ (TS) ອີງຕາມແຜນປີ 2023 ຈໍານວນ 6,755,108 ຕາແມັດ, ຈັດຕັ້ງປະຕິບັດໄດ້ແລ້ວ 2,284,304 ຕາແມັດ, ສາມາດກວດພົບລູກລະເບີດປະເພດຕ່າງໆດັ່ງນີ້ : ບົມໃຫ່ຍ 0 ໜ່ວຍ, ບົມບີ້ 2,024 ໜ່ວຍ, ສໍາພາວຸດ 1,943 ລູກ, ລວມຈໍານວນ ລບຕ ທັງໝົດ 3,967 ລູກ, ເທົ່າກັບ 33,81 % ຂອງແຜນປີ (ພື້ນທີ່ພັດທະນາອື່ນໆ ມີເນື້ອ 23,182 ຕາແມັດ ).
- ວຽກງານສໍາຫຼວດທາງດ້ານເຕັກນິກ (TS) ທັງ 02 ທີມແມ່ນເຮັດການສໍາຫຼວດກໍານົດຂອບເຂດອັນຕະລາຍທີ່ມີການຕົກຄ້າງຂອງ ລບຕ ເປົ້າໝາຍຂອງແຜນປີແມ່ນເນື້ອທີ່ (TS) 19,200,000 ຕາແມັດ ເນື້ອທີ່ແຜນປີ (CHA) 13,000,000 ຕາແມັດ ສໍາຫຼວດທາງດ້ານວິຊາການຕົວຈິງສາມາດປະຕິບັດໄດ້ເນື້ອທີ່ (TS) ໄດ້ແລ້ວ, 9,642,500 ຕາແມັດ, ກໍານົດເປັນພື້ນທີ່ອັນຕະລາຍ (CHA) 9,051,782 ຕາແມັດ, ສາມາດກວດພົບປະເພດບົມບີ້ໄດ້ 721 ໜ່ວຍ, ສໍາພາວຸດອື່ນໆ 248 ລູກ ບົມໃຫ່ຍ 01 ລູກ, ລວມ ລບຕ ທັງໝົດ 970 ລູກ, ເນື້ອທີ່ (TS) ເທົ່າກັບ 50,22 % ເນື້ອທີ່ (CHA) ເທົ່າກັບ 69,62 % ຂອງແຜນປີ.
- ວຽກງານທໍາລາຍລະເບີດເຄື່ອນທີ່ (RT) ບໍ່ໄດ້ກໍານົດບ້ານໄດ້ທໍາລາຍຕາມການລາຍງານຂອງປະຊາຊົນຈໍານວນ 117 ຄັ້ງ, ບົມໃຫ່ຍ 02 ໜ່ວຍ, ປະເພດບົມບີ້ຈໍານວນ 1,393 ໜ່ວຍ, ສໍາພາວຸດອື່ນໆ 439 ລູກ, ມິນຈໍານວນ 0 ໜ່ວຍ, ລວມຈໍານວນ ລບຕ ທັງໝົດ 1,834 ລູກ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 4,736 ຄົນ, ຊາຍ 2,241 ຄົນ, ຍິງ 2,494 ຄົນ.

**5.** ລົງຕິດຕາມວຽກງານພາກສະໜາມ ຄກລ ປະຈໍາ ແຂວງ ຊຽງຂວາງ.

ທີມງານໄດ້ລົງຕິດຕາມການ ເຄື່ອນໄຫວວຽກງານເກັບກູ້ ຢູ່ພາກສະໜາມໃນ 5 ບ້ານຄື: ບ້ານ ບີ້, ປຸ່ງໝັ້ນ, ນາໂອ, ນາຟ້າ ແລະ ບ້ານ ຫວດຕັນ, ເມືອງ ແປກ ແລະ ເມືອງ ພູກູດ, ແຂວງ ຊຽງຂວາງ, ໃນການລົງຢັ້ງຢາມພາກສະໜາມສັງເກດໄດ້ດັ່ງນີ້:

- ລົງຢັ້ງຢາມຕິດຕາມກວດກາ ສະໜາມທີ່ກໍາລັງກວດກູ້ ທີມງານ (AC 06) ບ້ານບີ້ ເມືອງແປກ ແຂວງ ຊຽງຂວາງ ລະຫັດໜ້າວຽກ Task ID : UXO lao_AC_2023_0901044_001, ວັນທີເລີ່ມຕົ້ນ 08/06/2023 ຄາດວ່າຈະສໍາເລັດວັນທີ 24/06/2023 ດິນກະສິກໍາ, ມີເນື້ອທີ່ລວມທັງໝົດ 51,272 ມ² ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ, ຈໍານວນ 02 ຄ/ດ, ຈໍານວນ 12 ຄົນ, ນໍາໃຊ້ເຄື່ອງກວດປະເພດ Upex 740 M, vallon VMH-4.
- ລົງຕິດຕາມວຽກງານການສໍາຫຼວດທາງດ້ານວິຊາການ (TS 01) ບ້ານ ຫວດຕັນ ເມືອງ ພູກູດ ແຂວງ ຊຽງຂວາງ ລະຫັດໜ້າວຽກ Task ID : UXOlao_TS_2023_0906031_001, ວັນທີເລີ່ມຕົ້ນ 07/ ຫາ 13/06/2023 ວິທີການສໍາຫຼວດ, ແມ່ນບໍ່ໃຫ້ຫຼຸດ 50 % ຂອງບັອກ 50x50, ແບ່ງອອກເປັນ 02 ຈຽນ

ສຳຫຼວດ, ຈຸງານໜຶ່ງ 04 ຄົນແບ່ງອອກເປັນ 04 ທິດ ນັກສຳຫຼວດຜູ້ທີ່ 1 ແມ່ນເລີ່ມແຕ່ມູມ 45 ອົງສາ, ຜູ້ທີ່ 2 ແມ່ນເລີ່ມແຕ່ມູມ 135 ອົງສາ, ຜູ້ທີ່ 03 ແມ່ນເລີ່ມແຕ່ມູມ 225 ອົງສາ, ຜູ້ທີ່ 04 ແມ່ນເລີ່ມແຕ່ມູມ 135 ອົງສາ, ເຊິ່ງຈະເລີ່ມຕົ້ນກວດຈາກແຈຂອງບັອກດ້ານນອກເຂົ້າມາຫາຈຸດໃຈກາງຂອງບັອກ, ສາມາດກຳນົດເປັນບັອກ ສີແດງໄດ້ 15 ບັອກ, ສີເຫຼືອງ 32 ບັອກ, ສີຂາວ 23 ບັອກ, ສີຟ້າ 8 ບັອກ, ສີເທົາ 0 ບັອກ, ສຳຫຼວດພົບລະເບີດເປົ້າໝາຍປະເພດລະເບີດລູກຫວ່ານຈຳນວນ 15 ໜ່ວຍ, ສຳພາວຸດອື່ນໆ 08 ລູກ, ເປັນດິນລວມຂອງບ້ານມີຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ 60 ຄ/ຄ, ຍິງ 140 ຄົນ, ຊາຍ 142 ຄົນ, ລວມທັງໝົດ 282 ຄົນ.

ລົງຄວບຄຸມຄຸນນະພາບ (QC) ສະໜາມທີ່ກວດກູ້ສຳເລັດແລ້ວຈຳນວນ 04 ສະໜາມລາຍລະອຽດຄື :

Task ID:UXO Lao_AC_2023_0901044_001, ມີເນື້ອທີ່ລວມ 55,189 ມ$^2$, =2,26%.

Task ID:UXO Lao_AC_2023_0901075_001, ມີເນື້ອທີ່ລວມ 23,542 ມ$^2$, =5,30%.

Task ID:UXO Lao_AC_2023_0906013_001, ມີເນື້ອທີ່ລວມ 46,461 ມ$^2$, =2,69%.

Task ID:UXO Lao_AC_2023_0901045_004, ມີເນື້ອທີ່ລວມ 48,346 ມ$^2$, =2,69%.

- ຜ່ານການ ກວດກາຄວບຄຸມຄຸນນະພາບທັງ 04 ສະໜາມ, ຄິດໄລ່ລວມອອກມາເປັນເປີເຊັນເທົ່າກັບ 12, 54%, ເຫັນວ່າມີຄວາມປອດໄພບໍ່ພົບສິ້ນສ່ວນສະເກັດທີ່ບໍ່ໃຫ່ຍກວ່າມາດຕະຖານແຫ່ງຊາດ ທີ່ໄດ້ກຳນົດໄວ້ເຄິ່ງໜຶ່ງຂອງບົມບີ້ blu 26 (½ blu 26).

6. ດ້ານດີ.

- ການຈັດຕັ້ງປະຕິບັດວຽກງານ ເກັບກູ້ລະເບີດ ຢູ່ພາກສະໜາມແມ່ນມີຄວາມປອດໄພ.
- ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກຂອງໂຄງການ ເກັບກູ້ລະເບີດແຫ່ງຊາດ.
- ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື່ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້ ສິ່ງທີ່ກ່າວມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານຂອງໂຄງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.
- ການປະຕິບັດງານຂອງທີມງານເກັບກູ້ ແມ່ນປະຕິບັດຕາມແຜນປະຈຳປີ, ພື້ນທີ່ເກັບກູ້ແມ່ນໄດ້ມາຈາກທີມງານສຳຫຼວດ ທາງດ້ານວິຊາການ, ບໍ່ແມ່ນວິຊາການ ການເຄື່ອນໄຫວວຽກງານເກັບກູ້ລະເບີດ ຂອງແຕ່ລະທີມງານເກັບກູ້ ແມ່ນເຮັດໄປພ້ອມກັນກັບການທຳລາຍໃນກໍລະນີທີ່ກວດພົບລະເບີດທີ່ບໍ່ສາມາດເຄື່ອນຍ້າຍໄດ້ແມ່ນຈະໄດ້ເຮັດການທຳລາຍໃນມື້ນັ້ນເລີຍ.
- ພາຍຫຼັງສຳເລັດການເກັບກູ້ ໃນບັອກໃດໜຶ່ງຫົວໜ້າທີມ ຈະໄດ້ກວດກາຄຸນນະພາບໃນບັອກດັ່ງກ່າວ 10%, ເມື່ອສາເລັດສະໜາມທັງໝົດ ແມ່ນວິຊາການ ຂັ້ນ 04 ຈະລົງກວດກາຄຸນນະພາບ 2% ອີກເທື່ອໜຶ່ງຈິ່ງສາມາດເຮັດໃບມອບຮັບ ເນື້ອທີ່ດິນໃຫ້ເຈົ້າຂອງໄປນຳໃຊ້ໄດ້ຕາມຈຸດປະສົງ.

7. ດ້ານອ່ອນຂໍ້ຄົງຄ້າງ.

1. ຜ່ານການຕິດຕາມກວດກາ ວຽກງານ (QC) ໃນ 04 ສະໜາມ ເຫັນວ່າຍັງມີບາງສະໜາມມີແຮ່ທາດເຈືອປົນແຕ່ຫົວໜ້າທີມ ບໍ່ມີການໝາຍຂອບເຂດທີ່ມີແຮ່ທາດເຈືອປົນນັ້ນໄວ້ ໃນແຜນວາດ ຫຼື ບົດລາຍງານຜົນສຳເລັດ, ສະນັ້ນທີມງານ (QM) ຈິ່ງໄດ້ແນະນຳໃຫ້ຫົວໜ້າ ທີມພາກສະໜາມ ເວລາກວດກູ້ສຳເລັດ ຖ້າສະໜາມໃດຫາກມີແຮ່ທາດເຈືອປົນ ພື້ນທີ່ໆນ້ອຍກວ່າ 25 ຕາແມັດ ໃຫ້ຈັບຄ່າຈຸດພິກັດດຽວ, ເປັນຈຸດ

ໃຈກາງ, ຖ້າຫາກໃຫ່ຍກ່ວາ 25 ຕາແມັດ ແມ່ນໃຫ້ຈັບຕາມຂອບເຂດຕົວຈິງ, ອີງຕາມ ບົດທີ 03 ການປະຕິບັດງານເກັບກູ້ລະເບີດ (SOP) ຄກລ ຂໍ້ທີ 23, ການບັນທຶກຂໍ້ມູນເກັບກູ້, ຂໍ້ທີ່ 23.1 ເອກະສານວຽກງານເກັບກູ້, ອີງຕາມມາດຕະຖານແຫ່ງຊາດ ບົດທີ 24 ການບໍລິຫານຄຸ້ມຄອງ ຂໍ້ມູນຂ່າວສານ ຂໍ້ທີ 10.1 ບົດບັນທຶກປະຈຳວັນ (ຂໍ້ ຍ) ແລະ ອີງຕາມ ບົດທີ 7 ການເກັບກູ້ລະເບີດບໍ່ທັນແຕກ ຂໍ້ 14 ວິທີການ ແລະ ລະບຽບການເກັບກູ້ (ຂໍ້ ຈ).

2. ອຸປະກອນການແພດ ຮັບໃຊ້ຢູ່ພາກສະໜາມຍັງບໍ່ຄົບຕາມຈຳນວນ ທີ່ ຄກລ ກຳນົດໄວ້ ຕາມ (SOPs) ຂອງ ຄກລ ບົດທີ 8 ລະບຽບການປະຕິບັດທາງດ້ານການແພດ, ຂໍ້ 3.2 ອຸປະກອນການແພດ.

3. ຜ່ານການກວດກາ ແລະ ຄວບຄຸມຄຸນນະພາບທັງ 04 ສະໜາມ, ແມ່ນບໍ່ພົບສິ້ນສ່ວນສະເກັດທີ່ ໃຫ່ຍກ່ວາມາດຕະຖານການປະຕິບັດງານ ແລະ ມາດຕະຖານແຫ່ງຊາດ ທີ່ກຳນົດໄວ້ (ຜ່ານ).

ຜ່ານການຕິດຕາມ ແລະ ກວດກາການປະຕິບັດງານເກັບກູ້ ຄກລ ແຂວງ ຊຽງຂວາງ ເຫັນວ່າດ້ານວິຊາການແມ່ນປະຕິບັດຖືກຕ້ອງຕາມທີ່ກຳນົດໃນມາດຕະຖານປະຕິບັດງານ (SOP) ຂອງໂຄງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດ ທີ່ໄດ້ກຳນົດໄວ້.

ສະນັ້ນ, ຈິ່ງລາຍງານມາຍັງທ່ານເພື່ອຊາບ.

| | |
|---|---|
| **ຫົວໜ້າຫ້ອງການ ຄຊກລ** | **ຫົວໜ້າໜ່ວຍງານຄຸ້ມຄອງຄຸນນະພາບ** |
| ຫ້ອງການ ຄຊກລ | ເຊັນແທນ |
| ດວງສີ ທຳມະວົງ | ພວງສອນ ຈັນສົມບັດ |

**ບ່ອນນຳສົ່ງ:**

- ໂຄງການເກັບກູ້ລະເບີດແຫ່ງຊາດເພື່ອຊາບ
- ຄກລຊ,ແຂວງ ຊຽງຂວາງ"ເພື່ອຊາບ ແລະ ປະຕິບັດ"
- ຫ້ອງການ ຄຊກລ ເກັບມ້ຽນ

ບ້ານ ສີສັງວອນ,ເມືອງໄຊເສດຖາ,ໄປສະນີ 7261,ນະຄອນຫຼວງວຽງຈັນ, ໂທ: (856 – 21) 262386,262416,ແຟັກ (856 -21) 262396,ທີ່ຢູ່ອີເມວລ໌. UXO,NRA @gmail.com; ເວັບໄຊ www.nra.gov.la.